ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*******

ທະນາຄານແຫ່ງ ສ.ປ.ປ.ລາວ

ຫ້ອງການ

ເລກທີ 386 /ທຫ

ນະຄອນຫລວງວຽງຈັນ, ວັນທີ 12 NOV 2010

## ແຈ້ງການ

## ກ່ຽວກັບການຈຳໜ່າຍ ທະນະບັດ ແລະ ຫລຽນທີ່ລະນຶກ

ເພື່ອປະກອບສ່ວນ ເຂົ້າໃນງານສະເຫລີມສະຫລອງວຽງຈັນເປັນນະຄອນຫລວງ ຄົບຮອບ 450 ປີ ແລະ ວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 35 ປີ.

ໂດຍການອະນຸຍາດ ຂອງລັດຖະບານ, ທະນາຄານ ແຫ່ງ ສປປ ລາວ ໄດ້ພິມຈຳໜ່າຍທະນະບັດ ແລະ ຫລຽນທີ່ລະນຶກ ດັ່ງມີລາຍລະອຽດຄື:

1. **ທະນະບັດທີ່ລະນຶກ.**

ປະເພດມູນຄ່າ 100.000 ກີບ (ໜຶ່ງແສນກີບ)

ດ້ານໜ້າ: ມີຮູບພະເຈົ້າໄຊຍະເສດຖາທິລາດ, ພະທາດຫລວງ, ດອກຈຳປາ ແລະ ຮູບນາກ.

ດ້ານຫລັງ: ມີຮູບວັດພະແກ້ວ ແລະ ດອກຈຳປາ.

ຂະໜາດ: 68 X 159 ມມ.

**ລັກສະນະທາງດ້ານເຕັກນິກ:** ທະນະບັດທີ່ລະນຶກດັ່ງກ່າວ ແມ່ນພິມດ້ວຍເຈ້ຍພິມພິເສດ ຄຸນນະພາບສູງ, ມີຮູບລາຍນ້ຳ, ກຳນົດຈຸດນິລະໄພຕ່າງໆ ຕ້ານການປອມແປງ, ພິມດ້ວຍນ້ຳມຶກ ແລະ ສີພິເສດຕ້ານການອັດສຳເນົາ.

**ທະນະບັດທີ່ລະນຶກນີ້ ສາມາດນຳໃຊ້ຊຳລະໜີ້ໄດ້ຕາມກົດໝາຍ.**

ດ້ານໜ້າ




ດ້ານຫລັງ




ທະນາຄານແຫ່ງ ສ.ປ.ປ.ລາວ, ຖະໜົນ ຍອນເນ, ນະຄອນຫລວງວຽງຈັນ ຕູ້ໄປສະນີ 19, SWIFT CODE : LPDR LALA, Website : www. bol.gov.la
ໂທລະພິມ: 4304 BNL.VTE.LS ໂທລະສານ: (856)-21-213108 ໂທລະສັບ: 213109-213110 E-mail: Bol@bol.gov.la

2. <u>ຫລຽນທີ່ລະນຶກ</u>.

ກ. **ປະເພດເງິນສິດ 925**; ນ້ຳໜັກ 1 ອອນ; ຂະໜາດ 36.5 ມມ; **ດ້ານໜ້າ**: ມີຮູບພະທາດຫລວງ, ແສງຕາເວັນ, ເຈົ້າໄຊຍະເສດຖາທິລາດ; **ດ້ານຫລັງ**: ມີຮູບວັດພະແກ້ວ ແລະ ຮູບຊ້າງຄູ່.

ຂ. **ປະເພດຄຳສິດ 999, 9**; ມີຫລາຍຂະໜາດ ແລະ ນ້ຳໜັກທີ່ແຕກຕ່າງກັນ, ດ້ານໜ້າ ແລະ ດ້ານຫລັງຂອງຫລຽນ ແມ່ນຄືກັນກັບຫລຽນເງິນ, ລາຍລະອຽດມີດັ່ງນີ້:

**ຫລຽນຄຳ**

ດ້ານໜ້າ ດ້ານຫລັງ




ຂະໜາດ : 36, 5 ມິນລິແມັດ

ນ້ຳໜັກ : 1 ອອນ




ຂະໜາດ : 27 ມິນລິແມັດ

ນ້ຳໜັກ : ½ ອອນ




ຂະໜາດ : 22 ມິນລິແມັດ

ນ້ຳໜັກ : 1/4 ອອນ



ຂະໜາດ : 15 ມິນລິແມັດ

ນ້ຳໜັກ : 1/8 ອອນ

## ຫລຽນເງິນ

ດ້ານໜ້າ ດ້ານຫລັງ







ຂະໜາດ : 36, 5 ມິນລິແມັດ

ນ້ຳໜັກ : 1 ອອນ

ເລີ່ມຈຳໜ່າຍ 15 ພະຈິກ 2010 ເປັນຕົ້ນໄປ; ສະນັ້ນ, ຈຶ່ງຂໍແຈ້ງການມາຍັງບັນດາ ຂະແໜງການ, ທ້ອງຖິ່ນ, ຊາວລາວ ແລະ ຊາວຕ່າງປະເທດເພື່ອຊາບ; ຖ້າທ່ານໃດມີຄວາມຕ້ອງການ ທະນະບັດ ແລະ ຫລຽນທີ່ລະນຶກດັ່ງກ່າວ **ກະລຸນາຕິດຕໍ່ພົວພັນ: ກົມເງິນຕາ ທະນາຄານແຫ່ງ ສປປ ລາວ** ທີ່ເບີໂທລະສັບ: 021 213 119 ຫລື 020 5564 7337, 020 5570 7161, 020 2402 974 ແລະ 020 2220 886.

**ພິເສດ:** ທະນາຄານແຫ່ງ ສປປ ລາວ ຈະຈັດຈຳໜ່າຍຢູ່ 3 ຈຸດ ຄື: ບໍລິເວນພະທາດຫລວງ, ສູນການຄ້າລາວ-ໄອເຕັກ ແລະ ສະໜາມກິລາແຫ່ງຊາດຫລັກ 16.

ສະນັ້ນ, ຈຶ່ງຂໍແຈ້ງມາເພື່ອຮັບຊາບທົ່ວເຖິງກັນ.

ຮອງ ຫ້ອງການ ທະນາຄານແຫ່ງ ສປປ ລາວ

ກິງເດືອນ ແສງນະນີ